**ມິຊຊາອາທິດທີ 16 ກຳນົດທຳມະດາປີ C**

**ວັນທີ 21 ກໍລະກົດ 2019**



**ພຣະວໍລະສານໂດຍນັກບຸນລູກາ 10, 38-42**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດເຂົ້າໃນບ້ານແຫ່ງໜຶ່ງ, ກໍມີຍິງຜູ້ໜຶ່ງຊື່ມັກທາໄດ້ຕ້ອນຮັບພຣະອົງຢູ່ເຮືອນຂອງຕົນ. ນາງມັກທາມີນ້ອງສາວຜູ້ໜຶ່ງຊື່ມາຣີອານັ່ງຢູ່ແທບພຣະບາດຂອງພຣະອົງເພື່ອຟັງພຣະວາຈາ.

ນາງມັກທາກັງວົນໃຈໃນການຕ້ອນຮັບຫລາຍ, ຈຶ່ງທູນພຣະອົງວ່າ: ພຣະອາຈານເອີຍ, ພຣະອົງບໍ່ເຫັນໃຈຂ້ານ້ອຍບໍ? ນ້ອງສາວຂ້ານ້ອຍປະໃຫ້ຂ້ານ້ອຍເຮັດວຽກຜູ້ດຽວ, ຂໍບອກນ້ອງມາຊ່ວຍຂ້ານ້ອຍແດ່.

ພຣະອົງກ່າວຕອບວ່າ: ມັກທາ, ມັກທາເອີຍ. ເຈົ້າກັງວົນສັບໃຈຫຍັງນຳຫລາຍສິ່ງຫລາຍຢ່າງແທ້. ສິ່ງຈຳເປັນແທ້ມີແຕ່ອັນດຽວ. ນາງມາຣີອາໄດ້ເລືອກເອົາສິ່ງທີ່ດີເລີດໄປແລ້ວ, ແລະບໍ່ມີໃຜຍາດເອົາໄປໄດ້ເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 10, 38-42**

ຜ່ານທາງວາຈາຂອງພຣະເຈົ້າວັນນີ້, ພວກເຮົາເຫັນວ່ານາງມັກທາແລະນ້ອງສາວຂອງນາງຄືມາຣີອາ ລ້ວນແຕ່ມີຄວາມຍິນດີທີ່ໄດ້ຕ້ອນຮັບພຣະເຢຊູເຈົ້າເຂົ້າມາໃນເຮືອນຂອງຕົນ. ແຕ່ມັກທາແຕກຕ່າງຈາກມາຣີອາຢູ່ບ່ອນວ່າ ນາງມາຣີອາໄດ້ນັ່ງຢູ່ແທບພຣະບາດຂອງພຣະເຢຊູເຈົ້າເພື່ອເພັ່ງຊົມແລະສົນທະນາກັບພຣະອົງ. ສ່ວນມັກທາບໍ່ໄດ້ເພັ່ງຊົມພຣະເຢຊູເຈົ້າແລະຟັງຄຳສົນທະນາຂອງພຣະອົງ, ເພາະນາງອາດຈະຢູ່ຫລັງບ້ານຫລືຢູ່ໃນເຮືອນຄົວເພື່ອຕຽມອາຫານສຳລັບຕ້ອນຮັບພຣະອົງ. ມັກທາແລະມາຣີອາອາດຈະມີວິທີຕ້ອນຮັບພຣະເຢຊູເຈົ້າແຕກຕ່າງກັນ. ມາຣີອາຕ້ອນຮັບພຣະເຢຊູເຈົ້າເໝືອນກັບເພື່ອນມິດສະຫາຍທີ່ຮັກແພງຜູ້ໜຶ່ງມາຢາມ. ເພາະສະນັ້ນນາງຈຶ່ງນັ່ງຟັງແລະສົນທະນາກັບພຣະອົງຢ່າງໃກ້ຊິດ. ສ່ວນມັກທາອາດຈະຕ້ອນຮັບພຣະເຢຊູເຈົ້າເໝືອນກັບອາຈານຜູ້ໜຶ່ງທີ່ມາຢາມ. ສິ່ງນີ້ສະແດງຜ່ານທາງຄຳເວົ້າຂອງນາງທີ່ວ່າ: « ພຣະອາຈານ, ພຣະອົງບໍ່ເຫັນໃຈຂ້ານ້ອຍບໍ? ນ້ອງສາວຂ້ານ້ອຍປະໃຫ້ຂ້ານ້ອຍເຮັດວຽກຜູ້ດຽວ ». ດ້ວຍເຫດນີ້, ມັກທາຈຶ່ງສົນລະວົນໃຈນຳການຢູ່ການກິນແລະຢູ່ຫ່າງໄກຈາກພຣະເຢຊູເຈົ້າ. ເມື່ອມັກທາສົນລະວົນໃຈນຳຫລາຍສິ່ງຫລາຍຢ່າງເພື່ອຮັບຕ້ອນພຣະເຢຊູເຈົ້າ, ນາງກໍບໍ່ມີຄວາມສະຫງົບແລະບໍ່ມີບ່ອນໃນໃຈສຳລັບພຣະອົງ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວກັບມັກທາວ່າ: « ມັກທາ, ມັກທາເອີຍ. ເຈົ້າກັງວົນສົນໃຈຫຍັງນຳຫລາຍສິ່ງຫລາຍຢ່າງແທ້. ສິ່ງຈຳເປັນແທ້ມີແຕ່ອັນດຽວ. ນາງມາຣີອາໄດ້ເລືອກເອົາສິ່ງທີ່ດີເລີດໄປແລ້ວ, ແລະບໍ່ມີໃຜຍາດເອົາໄປໄດ້ເລີຍ ». ບໍ່ແມ່ນມາຣີອາບໍ່ຢາກຕຽມອາຫານເພື່ອຕ້ອນຮັບພຣະເຢຊູເຈົ້າ, ແຕ່ນາງບໍ່ຢາກຢູ່ຫ່າງໄກພຣະອົງແມ່ນແຕ່ວິນາທີດຽວ. ແລະເປັນຕົ້ນນາງຢາກເພັ່ງຊົມຜູ້ທີ່ນາງຮັກແພງຄືພຣະເຢຊູກຣິສໂຕເຈົ້າ.

ໃນຊີວິດກຣິສຕັງຂອງພວກເຮົາກໍເຊັ່ນດຽວກັນ. ຫລາຍຄັ້ງພຣະເຢຊູເຈົ້າມາຢ້ຽມຢາມເຮືອນຊານແລະຈິດໃຈຂອງພວກເຮົາ ອັນແມ່ນຊ່ວງເວລາແຫ່ງການພາວະນາ, ໃນມະຫາບູຊາມິຊຊາ, ແລະເປັນຕົ້ນເມື່ອພວກເຮົາຮັບເອົາພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າເຂົ້າມາໃນຈິດໃຈພວກເຮົາ. ພວກເຮົາໄດ້ນັ່ງເພັ່ງຊົມແລະຟັງສຽງຂອງພຣະອົງບໍ? ພວກເຮົາໄດ້ສົນທະນາກັບພຣະອົງເໝືອນດັ່ງເພື່ອນມິດສະຫາຍທີ່ຮັກແພງບໍ? ຫລືພວກເຮົາເປັນເໝືອນມັກທາທີ່ສົນລະວົນໃຈນຳຫລາຍສິ່ງຫລາຍຢ່າງ, ນຳການຊອກຢູ່ຫາກິນເລີຍບໍ່ໄດ້ເພັ່ງຊົມພຣະອົງ, ຟັງສຽງຂອງພຣະອົງ ແລະບໍ່ມີບ່ອນໃນໃຈສຳລັບພຣະອົງ?

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ຮູ້ຈັກເລືອກສິ່ງທີ່ດີເລີດແລະສຳຄັນທີ່ສຸດນັ້ນຄືການໄດ້ຢູ່ແທບພຣະບາດຂອງພຣະເຢຊູເຈົ້າເພື່ອເພັ່ງຊົມພຣະອົງ, ເພື່ອຟັງວາຈາຂອງພຣະອົງ ແລະເປັນຕົ້ນເພື່ອປາກເວົ້າກັບພຣະອົງດັ່ງເພື່ອນມິດສະຫາຍທີ່ຮັກແພງພວກເຮົາ. ເພາະບໍ່ມີສິ່ງໃດໃນໂລກຈະນຳຄວາມຍິນດີແລະຄວາມສຸກມາໃຫ້ພວກເຮົາໄດ້, ນອກຈາກການໄດ້ຢູ່ຮ່ວມກັບພຣະເຢຊູເຈົ້າຕະຫລອດໄປນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ